ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ ເລກທີ 05-97/ສພຊ

# ມະຕິຕົກລົງ

**ຂອງ**

**ສະພາແຫ່ງຊາດແຫ່ງ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ກ່ຽວກັບການຕົກລົງຮັບຮອງເອົາກົດໝາຍ ວ່າດ້ວຍ**

**ການເລືອກຕັ້ງສະມາຊິກສະພາແຫ່ງຊາດ**

---

- ອີງຕາມມາດຕາ 40 ຂໍ້ 2 ຂອງລັດຖະທຳມະນູນ ແລະ ມາດຕາ 2 ຂໍ້ 2 ຂອງກົດໝາຍ ວ່າດ້ວຍສະພາແຫ່ງຊາດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ;

ພາຍຫລັງໄດ້ຄົນຄ້ວາພິຈາລະນາຢ່າງກ້ວາງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ກອງປະຊຸມ ເທື່ອທີ່ 10 ສະໄໝສາມັນ ຂອງສະພາແຫ່ງຊາດຊຸດທີ່ III ໃນວາລະປະຊຸມຕອນບ່າຍ ຂອງວັນທີ 12 ເມສາ 1997.

ຕົກລົງ:

ມາດຕາ 1: ຮັບຮອງເອົາກົດໝາຍວ່າດ້ວຍ ການເລືອກຕັ້ງສະມາຊິກສະພາແຫ່ງຊາດ ດ້ວຍຄະແນນສຽງຢ່າງເປັນເອກະສັນ.

ມາດຕາ 2: ມະຕິຕົກລົງສະບັບນີ້ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ວຽງຈັນ, ວັນທີ 12 ເມສາ 1997
ປະທານສະພາແຫ່ງຊາດ
ສະໝານ ວິຍະເກດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເລກທີ 37 ສປປ

# ລັດຖະດຳລັດ

**ຂອງປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍການ**

**ເລືອກຕັ້ງສະມາຊິກສະພາແຫ່ງຊາດ.**

- ອີງຕາມລັດຖະທຳມະນູນແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ V ມາດຕາ 53, ຂໍ້ 1;
- ອີງຕາມມະຕິຕົກລົງຂອງກອງປະຊຸມ ເທື່ອທີ່ 10 ສະໄໝສາມັນ ຂອງສະພາແຫ່ງຊາດ ຊຸດທີ່ III ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍ ການເລືອກຕັ້ງສະມາຊິກສະພາແຫ່ງຊາດ ສະບັບເລກທີ 05-97/ສພຊ ລົງວັນທີ 12 ເມສາ 1997.
- ອີງຕາມການສະເໜີ ຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 18/ຄປຈ, ລົງວັນທີ 7 ພຶດສະພາ1997.

ປະທານປະເທດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:

ມາດຕາ 1: ປະກາດໃຊ້ກົດໝາຍວ່າດ້ວຍ ການເລືອກຕັ້ງສະມາຊິກສະພາແຫ່ງຊາດ.

ມາດຕາ 2: ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ວຽງຈັນ, ວັນທີ 31 ພຶດສະພາ 1997.

ປະທານປະເທດ

ໜູຮັກ ພູມສະຫວັນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ ເລກທີ 05/97/ ສພຊ

12/04/1997

# ກົດໝາຍ

## ວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ

## ໝວດທີ I

## ບົດບັນຍັດທົ່ວໄປ

**ມາດຕາ 1. ໜ້າທີ່**

ກົດໝາຍສະບັບນີ້ກຳນົດຫລັກການ ແລະລະບຽບການ ກ່ຽວກັບການເລືອກຕັ້ງສະມາຊິກສະພາແຫ່ງຊາດ ເພື່ອຮັບປະກັນການປະຕິບັດສິດປະຊາທິປະໄຕຂອງປະຊາຊົນບັນດາເຜົ່າ ໃຫ້ໄດ້ຢ່າງເຕັມສ່ວນ ແລະຮັບປະກັນການເລືອກຕັ້ງ ໃຫ້ໄດ້ຜູ້ທີ່ມີມາດຕະຖານອັນຄົບຖ້ວນ ເປັນສະມາຊິກສະພາແຫ່ງຊາດ, ແນໃສ່ປັບປຸງບູລະນະອົງການນິຕິບັນຍັດໃຫ້ໜັກແໜ້ນ, ເຂັ້ມ ແຂງເປັນອົງການແຫ່ງສິດອຳນາດຂອງປະຊາຊົນ, ໂດຍປະຊາຊົນ ແລະເພື່ອປະຊາຊົນຢ່າງແທ້ຈິງ.

**ມາດຕາ 2. ຫລັກການ**

ການເລືອກຕັ້ງສະມາຊິກສະພາແຫ່ງຊາດຢູ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແມ່ນປະຕິບັດຕາມຫລັກການ ສີ່ປະການ ດັ່ງນີ້ :

1. ຫລັກການທົ່ວໄປ;
2. ຫລັກການສະເໝີພາບ;
3. ຫລັກການໂດຍກົງ;
4. ຫລັກການລົງຄະແນນສຽງປິດລັບ.

**ມາດຕາ 3. ຜູ້ມີສິດເລືອກຕັ້ງ ແລະມີສິດສະໝັກຮັບເລືອກຕັ້ງ**

ພົນລະເມືອງລາວທຸກຄົນ ໂດຍບໍ່ຈຳແນກເພດ, ຊົນເຜົ່າ, ການເຊື່ອຖື, ຖານະໃນສັງຄົມ, ທີ່ຕັ້ງພູມລຳເນົາ, ວິຊາຊີບ ທີ່ມີອາຍຸ ແຕ່ສິບແປດປີ ຂຶ້ນໄປ ລ້ວນແຕ່ມີສິດປ່ອນບັດເລືອກຕັ້ງ ແລະມີອາຍຸແຕ່ຊາວເອັດປີ ຂຶ້ນໄປ ລ້ວນແຕ່ມີສິດສະໝັກຮັບເລືອກຕັ້ງ ເປັນສະມາຊິກສະພາແຫ່ງຊາດ.

**ມາດຕາ 4. ຜູ້ທີ່ບໍ່ມີສິດປ່ອນບັດເລືອກຕັ້ງ ແລະບໍ່ມີສິດສະໝັກຮັບເລືອກຕັ້ງ**

ຜູ້ທີ່ບໍ່ມີສິດປ່ອນບັດເລືອກຕັ້ງ ແລະບໍ່ມີສິດສະໝັກຮັບເລືອກຕັ້ງມີ ດັ່ງນີ້ :

1. ຜູ້ທີ່ເປັນບ້າ, ເສຍຈິດ;

2. ຜູ້ທີ່ຖືກສານປະຊາຊົນປົດສິດເລືອກຕັ້ງ ແລະ ຮັບສະໝັກຮັບເລືອກຕັ້ງ ຫລື ຕັດອິດສະລະພາບ.

**ມາດຕາ 5. ສິດສະເໜີໃຫ້ປົດສະມາຊິກສະພາແຫ່ງຊາດ**

ຜູ້ເລືອກຕັ້ງມີສິດສະເໜີ ໃຫ້ປົດສະມາຊິກສະພາແຫ່ງຊາດຜູ້ໃດຜູ້ໜຶ່ງ ໃນເຂດເລືອກຕັ້ງຂອງຕົນກໍໄດ້ ຖ້າເຫັນວ່າຜູ້ນັ້ນ ຫາກມີການປະພຶດຕົນບໍ່ສົມກຽດສັກສີ, ແຕ່ຄຳສະເໜີນີ້ຕ້ອງໄດ້ຮັບຄຳເຫັນດີຂອງຄະນະປະຈຳສະພາແຫ່ງຊາດ ແລະໄດ້ຮັບການຕົກລົງດ້ວຍສຽງ ສ່ວນຫລາຍເກີນກ່ວາເຄິ່ງໜຶ່ງຂອງຈຳນວນສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ.

ຜູ້ທີ່ສະເໜີໃຫ້ປົດສະມາຊິກສະພາແຫ່ງຊາດ ກໍຕ້ອງຮັບຜິດຊອບຕໍ່ຄຳສະເໜີຂອງຕົນຕາມລະບຽບກົດໝາຍ.

**ມາດຕາ 6. ການໃຊ້ຈ່າຍເຂົ້າໃນການເລືອກຕັ້ງ**

ການໃຊ້ຈ່າຍເຂົ້າ ໃນການເລືອກຕັ້ງສະມາຊິກສະພາແຫ່ງຊາດ ໃຫ້ນຳໃຊ້ງົບປະມານຂອງລັດ.

## ໝວດທີ II
## ການກຳນົດຈຳນວນສະມາຊິກສະພາແຫ່ງຊາດ
## ແລະລະບຽບການ ກ່ຽວກັບຜູ້ສະໝັກຮັບເລືອກຕັ້ງ

**ມາດຕາ 7. ຫລັກການກຳນົດຈຳນວນສະມາຊິກສະພາແຫ່ງຊາດ**

ການກຳນົດຈຳນວນສະມາຊິກສະພາແຫ່ງຊາດໃຫ້ຄິດໄລ່ໂດຍອີງໃສ່ຫລັກການ ດັ່ງນີ້ :

1. ອີງໃສ່ພົນລະເມືອງຫ້າສິບພັນຄົນໃດ ໃຫ້ມີສະມາຊິກສະພາແຫ່ງຊາດໜຶ່ງຄົນ;

2. ອີງໃສ່ຫລັກການເຮັດວຽກເປັນໝູ່ຄະນະ, ສຳລັບແຂວງ ຫລື ເຂດພິເສດ ທີ່ມີພົນລະເມືອງຫລຸດໜຶ່ງຮ້ອຍຫ້າສິບພັນຄົນ ໃຫ້ມີສະມາຊິກສະພາແຫ່ງຊາດສາມຄົນ;

3. ອີງໃສ່ຄວາມສຳຄັນ ແລະຈຸດພິເສດທາງດ້ານການເມືອງ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ເສດຖະກິດ, ວັດທະນະທຳ-ສັງຄົມຂອງແຕ່ລະແຂວງ, ກຳແພງ ນະຄອນ ແລະເຂດພິເສດ.

ຈຳນວນສະມາຊິກສະພາແຫ່ງຊາດຕ້ອງຮັບປະກັນ ໃຫ້ມີຕົວແທນຂອງບັນດາຊັ້ນຄົນ, ເພດ ແລະຊົນເຜົ່າໃນອັດຕາສ່ວນຢ່າງເໝາະສົມ.

ຄະນະປະຈຳສະພາແຫ່ງຊາດ ເປັນຜູ້ກຳນົດຈຳນວນສະມາຊິກສະພາແຫ່ງຊາດ ໃນແຕ່ລະເຂດເລືອກຕັ້ງ ແລ້ວປະກາດອອກ ໂດຍລັດຖະດຳລັດຂອງປະທານປະເທດ.

**ມາດຕາ 8 (ໃໝ່). ມາດຖານຂອງຜູ້ສະໝັກຮັບເລືອກຕັ້ງ**

ຜູ້ສະໝັກຮັບເລືອກຕັ້ງເປັນສະມາຊິກສະພາແຫ່ງຊາດຕ້ອງມີເງື່ອນໄຂ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 3 ຂອງກົດໝາຍສະບັບນີ້ ແລະ ຕ້ອງມີມາດຖານຄົບຖ້ວນ ດັ່ງລຸ່ມນີ້ :

1. ມີນ້ຳໃຈຮັກຊາດ, ຮັກລະບອບປະຊາທິປະໄຕປະຊາຊົນ, ມີຄວາມຈົງຮັກພັກດີຕໍ່ແນວທາງປ່ຽນແປງໃຫມ່ຂອງພັກ, ມີຄວາມຕັ້ງຕໍ່ບໍລິສຸດຕໍ່ປະເທດຊາດ ແລະຮັບໃຊ້ຜົນປະໂຫຍດຂອງປະຊາຊົນຢ່າງສຸດກົກສຸດປາຍ. ມີຫລັກໝັ້ນນົດ - ສັດຕູຢ່າງຈະແຈ້ງ ແລະ ເດັດຂາດ;

2. ມີລະດັບຄວາມຮັບຮູ້ອັນແນ່ນອນໃນການກຳແໜ້ນແນວທາງ, ແຜນນະໂຍບາຍຂອງພັກ ແລະ ລະບຽບກົດຫມາຍຂອງລັດ, ຮູ້ໂຄສະນາປຸກລະດົມຊວນເຊື່ອ ແລະສຶກສາອົບຮົມປະຊາຊົນ ໃຫ້ຕື່ນຕົວເຂົາຮ່ວມຈັດຕັ້ງປະຕິບັດແນວທາງຂອງພັກ ແລະ ກົດໝາຍຂອງລັດໃຫ້ປາກົດຜົນເປັນຈິງ;

3. ມີທັດສະນະມະຫາຊົນຢ່າງຖືກຕ້ອງ, ເປັນສັນຍາລັກແຫ່ງຄວາມສາມັກຄີປະຊາຊົນບັນດາເຜົ່າ, ມີແບບແຜນເຮັດວຽກ ທີ່ຕິດພັນກັບຮາກຖານ, ໃກ້ຊິດຕິດແທດກັບປະຊາຊົນ ແລະໄດ້ຮັບຄວາມໄວ້ເນື້ອເຊື່ອໃຈຈາກປະຊາຊົນ;

4. ຕ້ອງແມ່ນຄົນລາວທີ່ເປັນສັນຊາດລາວ, ພວມດຳລົງຊີວິດ ແລະ ປະຕິບັດໜ້າທີ່ຢູ່ພາຍໃນປະເທດ;

5. ມີລະດັບຄວາມຮູ້, ຄວາມສາມາດອັນແນ່ນອນເພື່ອສາມາດຄົ້ນຄ້ວາ ແລະ ປະກອບຄວາມເຫັນເຂົາໃນການປະຕິບັດສິດ ແລະ ໜ້າທີ່ຂອງສະມາຊິກສະພາແຫ່ງຊາດ;

6. ມີສຸຂະພາບດີ ເພື່ອຮັບປະກັນການປະຕິບັດໜ້າທີ່ວຽກງານທີ່ຖືກມອບໝາຍຢ່າງເປັນປົກກະຕິ.

ມາດຕາ 9(ໃໝ່). ການສະເຫນີລາຍຊື່ ແລະການຈັດລຽງເລກລຳດັບ ຂອງຜູ້ສະຫມັກຮັບເລືອກຕັ້ງ

ທຸກອົງການຈັດຕັ້ງຂອງພັກ, ຂອງລັດ, ຂອງແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນມີສິດສະເຫນີລາຍຊື່ຜູ້ຕາງຫນ້າອົງການຂອງຕົນ ອອກສະຫມັກຮັບເລືອກຕັ້ງເປັນສະມາຊິກສະພາແຫ່ງຊາດ ໂດຍຜ່ານຄະນະກຳມະການເລືອກຕັ້ງຂັ້ນທ້ອງຖິ່ນໃນເຂດເລືອກຕັ້ງນັ້ນ ແລ້ວນຳສະເຫນີໃຫ້ຄະນະກຳມະການເລືອກຕັ້ງລະດັບຊາດ ເປັນຜູ້ພິຈາລະນາ ແລະຕົກລົງ.

ສຳລັບບັນດາຂະແໜງການ ແລະອົງການຈັດຕັ້ງຕ່າງໆຂັ້ນສູນກາງນັ້ນ ໃຫ້ຍື່ນຄຳສະເຫນີ ແລະລາຍຊື່ຜູ້ສະຫມັກຮັບເລືອກຕັ້ງ ໃຫ້ຄະນະກຳມະການເລືອກຕັ້ງລະດັບຊາດໂດຍກົງກໍໄດ້.

ການຕົກລົງລາຍຊື່ຜູ້ສະຫມັກຮັບເລືອກຕັ້ງ ເປັນສະມາຊິກສະພາແຫ່ງຊາດ ຕ້ອງຮັບປະກັນຫລັກການສົມທົບລະຫວ່າງການຄວບຕຳແໜ່ງ ແລະບໍ່ຄວບຕຳແໜ່ງໃນອົງການລັດຂັ້ນຕ່າງໆຢ່າງສົມເຫດສົມຜົນ.

ການຈັດລຽງເລກລຳດັບຂອງຜູ້ສະໝັກຮັບເລືອກຕັ້ງໃນແຕ່ລະເຂດເລືອກຕັ້ງອາດຈະຈັດລຽງຕາມຕົວອັກສອນລາວ ຫລື ດ້ວຍວິທີອື່ນກໍໄດ້ຕາມການຕົກລົງຂອງຄະນະກຳມະການເລືອກຕັ້ງລະດັບຊາດ.

**ມາດຕາ 10. ການປະກອບເອກະສານຂອງຜູ້ສະໝັກຮັບເລືອກຕັ້ງ**

ຜູ້ສະໝັກຮັບເລືອກຕັ້ງເປັນສະມາຊິກສະພາແຫ່ງຊາດ ຕ້ອງປະກອບເອກະສານຕ່າງໆ ດັ່ງນີ້ :

1. ໃບຄຳຮ້ອງຂໍສະໝັກຮັບເລືອກຕັ້ງ ເປັນສະມາຊິກສະພາແຫ່ງຊາດ;
2. ຊີວະປະຫວັດ;
3. ຮູບຂະໜາດ ຫົກຄູນເກົາຊັງຕີແມັດ;
4. ໃບຢັ້ງຢືນທີ່ຢູ່;
5. ໃບຢັ້ງຢືນສຸຂະພາບ.

**ມາດຕາ 11. ການປະກາດລາຍຊື່ຜູ້ສະໝັກຮັບເລືອກຕັ້ງ**

ຄະນະກຳມະການເລືອກຕັ້ງລະດັບຊາດເປັນຜູ້ພິຈາລະນາ ແລະສັງລວມບັນດາລາຍຊື່ຜູ້ສະໝັກຮັບເລືອກຕັ້ງ ເປັນສະມາຊິກສະພາແຫ່ງຊາດໃນທົ່ວປະເທດ ແລ້ວປະກາດເປັນທາງການ ຢ່າງຊ້າ ຫົກສິບວັນ ກ່ອນວັນເລືອກຕັ້ງ.

**ມາດຕາ 12. ການສະເໜີຄັດຄ້ານຜູ້ສະໝັກຮັບເລືອກຕັ້ງ**

ຜູ້ປ່ອນບັດເລືອກຕັ້ງທຸກຄົນມີສິດສະເໜີ ຂໍຄັດຄ້ານຜູ້ສະໝັກຮັບເລືອກຕັ້ງຜູ້ໃດຜູ້ໜຶ່ງ ຢ່າງເປັນລາຍລັກອັນສອນ ຫລື ດ້ວຍປາກເປົ່າ ພາຍໃນກຳນົດເຈັດວັນ ນັບຕັ້ງແຕ່ມື້ປະກາດລາຍຊື່ຜູ້ສະໝັກຮັບເລືອກຕັ້ງເປັນຕົ້ນໄປ, ຖ້າເຫັນວ່າຜູ້ນັ້ນ ຫາກບໍ່ມີມາດຕະຖານພຽງພໍ ຫລື ມີການກະທຳລະເມີດລະບຽບກົດໝາຍ ທີ່ແຕະຕ້ອງເຖິງສິດຜົນປະໂຫຍດຂອງປະຊາຊົນ.

ຄຳສະເໜີຂໍຄັດຄ້ານນັ້ນ ໃຫ້ຍື່ນຕໍ່ຄະນະກຳມະການເລືອກຕັ້ງຂັ້ນເມືອງ ເພື່ອລາຍງານໃຫ້ຄະນະກຳມະການເລືອກຕັ້ງຂັ້ນແຂວງ, ກຳແພງນະຄອນ ຫລື ເຂດພິເສດ ເພື່ອພິຈາລະນາແກ້ໄຂພາຍໃນກຳນົດສາມວັນ. ໃນກໍລະນີບໍ່ສາມາດແກ້ໄຂໄດ້ ຕ້ອງສົ່ງດ່ວນໃຫ້ຄະນະກຳມະການເລືອກຕັ້ງລະດັບຊາດ ພິຈາລະນາແກ້ໄຂພາຍໃນກຳນົດ ຫ້າ ວັນ ນັບແຕ່ມື້ໄດ້ຮັບຄຳສະເໜີເປັນຕົ້ນໄປ.

ຜູ້ສະເໜີຂໍຄັດຄ້ານຕ້ອງຮັບຜິດຊອບຕໍ່ຄຳສະເໜີຂອງຕົນຕາມລະບຽບກົດໝາຍ.

**ມາດຕາ 13. ການຈັດຕັ້ງໂຄສະນາຫາສຽງ**

ອົງການຈັດຕັ້ງຂອງພັກ, ຂອງລັດ ແລະອົງການຈັດຕັ້ງມະຫາຊົນທຸກຂັ້ນມີສິດ ແລະໜ້າທີ່ຈັດຕັ້ງການໂຄສະນາຫາສຽງ ໃຫ້ຜູ້ສະໝັກຮັບເລືອກຕັ້ງໃນແຕ່ລະເຂດເລືອກຕັ້ງ ຕາມລະບຽບກົດໝາຍ.

ຜູ້ສະໝັກຮັບເລືອກຕັ້ງແຕ່ລະຄົນກໍມີສິດໂຄສະນາຫາສຽງໃຫ້ແກ່ຕົນເອງ, ແຕ່ຫ້າມການກະທຳທີ່ມີລັກສະນະຊື້ຈ້າງຈອບອອຍຜູ້ມີສິດເລືອກຕັ້ງ ຫລື ການໂຄສະນາທັບຖົມບິດບາດຂອງຜູ້ສະໝັກຮັບເລືອກຕັ້ງຜູ້ອື່ນ. ການໂຄສະນາຫາສຽງໃຫ້ເລີ່ມແຕ່ມື້ປະກາດລາຍຊື່ ຜູ້ສະໝັກຮັບເລືອກຕັ້ງເປັນຕົ້ນໄປ ແລະຕ້ອງຢຸດຕິລົງ ກ່ອນວັນເລືອກຕັ້ງໜຶ່ງວັນ.

## ໝວດທີ III
## ການກຳນົດເຂດເລືອກຕັ້ງ ແລະ ໜ່ວຍປ່ອນບັດເລືອກຕັ້ງ

### ມາດຕາ 14 (ໃໝ່ ). ການກຳນົດເຂດເລືອກຕັ້ງ

ການເລືອກຕັ້ງສະມາຊິກສະພາແຫ່ງຊາດຢູ່ ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ແມ່ນຖືເອົາແຂວງ, ກຳແພງນະຄອນ ແລະເຂດພິເສດ ເປັນເຂດເລືອກຕັ້ງ.

ໃນກໍລະນີທີ່ມີການຍຸບ ຫລື ສ້າງຕັ້ງແຂວງ ຫລື ເຂດພິເສດໃດໜຶ່ງນັ້ນ, ຄະນະປະຈຳສະພາແຫ່ງຊາດຈະເປັນຜູ້ຕົກລົງ ກ່ຽວກັບການແຈກຢາຍສະມາຊິກສະພາແຫ່ງຊາດໃນເຂດເລືອກຕັ້ງດັ່ງກ່າວ ໃຫ້ແທດເໝາະກັບສະພາບການຕົວຈິງ ເພື່ອຮັບປະກັນການປະຕິບັດສິດ ແລະໜ້າທີ່ຂອງຜູ້ແທນປະຊາຊົນຢ່າງເປັນປົກກະຕິ.

### ມາດຕາ 15. ການກຳນົດໜ່ວຍປ່ອນບັດເລືອກຕັ້ງ

ການກຳນົດໜ່ວຍປ່ອນບັດເລືອກຕັ້ງໃຫ້ຖືເອົາບ້ານເປັນຫລັກ, ບ້ານໃດມີຜູ້ມີສິດເລືອກຕັ້ງ ແຕ່ຫ້າຮ້ອຍ ເຖິງ ໜຶ່ງພັນ ຄົນ ໃຫ້ຈັດຕັ້ງເປັນໜ່ວຍປ່ອນບັດເລືອກຕັ້ງໜຶ່ງ, ຖ້າຫາກຫລາຍກ່ວາໜຶ່ງພັນຄົນຂຶ້ນໄປ ໃຫ້ຈັດຕັ້ງເປັນຫລາຍໜ່ວຍປ່ອນບັດເລືອກຕັ້ງກໍໄດ້.

ສຳລັບບ້ານໃດ ທີ່ມີຈຳນວນຜູ້ມີສິດເລືອກຕັ້ງຫລຸດຫ້າຮ້ອຍຄົນນັ້ນ ໃຫ້ໂຮມເຂົ້າກັບບ້ານໃກ້ຄຽງ ແລ້ວຈັດຕັ້ງເປັນໜ່ວຍປ່ອນບັດເລືອກຕັ້ງໜຶ່ງ.

ໃນກໍລະນີບ້ານທີ່ຢູ່ຫ່າງໄກສອກຫລີກ, ການໄປມາມີຄວາມຫຍຸ້ງຍາກຫລາຍນັ້ນອາດຈະຈັດຕັ້ງເປັນໜ່ວຍປ່ອນບັດເລືອກຕັ້ງໜຶ່ງ ຫລື ຈັດຕັ້ງໜ່ວຍຮັບຜິດຊອບຫີບບັດເຄື່ອນທີ່ເພື່ອໄປຮັບເອົາບັດລົງຄະແນນສຽງຂອງຜູ້ມີສິດເລືອກຕັ້ງກໍໄດ້.

### ມາດຕາ 16. ການກຳນົດໜ່ວຍປ່ອນບັດເລືອກຕັ້ງຢູ່ໃນກຳລັງປ້ອງກັນຊາດ-ປ້ອງກັນຄວາມສະ ຫງົບ

ຄະນະກອງບັນຊາການກອງພົນ ຫລື ກອງພັນໃຫຍ່, ກອງພັນ ແລະຄະນະກອງບັນຊາການແຂວງ, ກຳແພງນະຄອນ ແລະເຂດພິເສດ ເປັນຜູ້ກຳນົດໜ່ວຍປ່ອນບັດເລືອກຕັ້ງຢູ່ໃນກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລ້ວແຈ້ງໃຫ້ຄະນະກຳມະການເລືອກຕັ້ງຂັ້ນເມືອງ ທີ່ກົມກອງນັ້ນຕັ້ງຢູ່ຊາບ.

ສຳລັບຢູ່ກະຊວງປ້ອງກັນປະເທດ ແລະກະຊວງພາຍໃນ ຖ້າຫາກມີຄວາມຈຳເປັນຈັດຕັ້ງໜ່ວຍປ່ອນບັດເລືອກຕັ້ງສະເພາະນັ້ນ ໃຫ້ຫ້ອງການກະຊວງເປັນຜູ້ກຳນົດ ແລ້ວແຈ້ງໃຫ້ຄະນະກຳມະການເລືອກຕັ້ງຂັ້ນເມືອງ ບ່ອນທີ່ກະຊວງນັ້ນຕັ້ງຢູ່ຊາບ.

## ໝວດທີ IV
## ການຂຶ້ນບັນຊີລາຍຊື່ ຜູ້ມີສິດເລືອກຕັ້ງ

### ມາດຕາ 17. ການຂຶ້ນບັນຊີລາຍຊື່ ຜູ້ມີສິດເລືອກຕັ້ງ

ນາຍບ້ານເປັນຜູ້ຮັບຜິດຊອບການຂຶ້ນບັນຊີລາຍຊື່ ຜູ້ມີສິດເລືອກຕັ້ງໃນຂອບເຂດບ້ານຂອງຕົນ.

ການຂຶ້ນບັນຊີລາຍຊື່ ຜູ້ມີສິດເລືອກຕັ້ງຕ້ອງໃຫ້ແລ້ວ ແລະປະກາດເປັນທາງການ ຢ່າງຊ້າ ສີ່ສິບຫ້າ ວັນ ກ່ອນວັນເລືອກຕັ້ງ.

ຜູ້ມີສິດເລືອກຕັ້ງຜູ້ໜຶ່ງ ມີສິດຈົດຊື່ຂອງຕົນ ເຂົ້າໃນບັນຊີຂອງໜ່ວຍປ່ອນບັດເລືອກຕັ້ງໜ່ວຍດຽວເທົ່ານັ້ນ.

### ມາດຕາ 18. ການຂຶ້ນບັນຊີລາຍຊື່ ຜູ້ມີສິດເລືອກຕັ້ງຢູ່ກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ

ຄະນະກອງບັນຊາການກອງພົນ ຫລື ກອງພັນໃຫຍ່, ກອງພັນ ແລະຄະນະກອງບັນຊາການແຂວງ, ກຳແພງນະຄອນ ແລະເຂດພິເສດ ເປັນຜູ້ຮັບຜິດຊອບການຂຶ້ນບັນຊີລາຍຊື່ ຜູ້ມີສິດເລືອກຕັ້ງຢູ່ໃນກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ.

### ມາດຕາ 19. ການປ່ຽນບ່ອນປ່ອນບັດຂອງຜູ້ມີສິດເລືອກຕັ້ງ

ພາຍຫລັງທີ່ໄດ້ປະກາດບັນຊີລາຍຊື່ ຜູ້ມີສິດເລືອກຕັ້ງແລ້ວ ຖ້າຜູ້ໃດຜູ້ໜຶ່ງຫາກຖືກຍົກຍ້າຍ ຫລື ໄປເຮັດ ວຽກງານຢູ່ບ່ອນອື່ນນັ້ນ ຕ້ອງແຈ້ງໃຫ້ນາຍບ້ານ ຫລື ກົມກອງ ບ່ອນທີ່ຕົນໄດ້ຂຶ້ນບັນຊີຊາບ ເພື່ອຂໍເອົາໃບຢັ້ງຢືນ ໄປລົງຄະແນນສຽງຢູ່ໜ່ວຍປ່ອນບັດເລືອກຕັ້ງບ່ອນໃໝ່.

## ໝວດທີ V
## ການຈັດຕັ້ງຄະນະກຳມະການເລືອກຕັ້ງຂັ້ນຕ່າງໆ

### ມາດຕາ 20. ລະບົບການຈັດຕັ້ງຄະນະກຳມະການເລືອກຕັ້ງ

ຄະນະກຳມະການເລືອກຕັ້ງສະມາຊິກສະພາແຫ່ງຊາດຢູ່ ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ໄດ້ຮັບການສ້າງຕັ້ງຕາມລະບົບ ດັ່ງນີ້ :

1. ຄະນະກຳມະການເລືອກຕັ້ງລະດັບຊາດ;
2. ຄະນະກຳມະການເລືອກຕັ້ງຂັ້ນແຂວງ, ກຳແພງນະຄອນ ແລະເຂດພິເສດ;

3. ຄະນະກຳມະການເລືອກຕັ້ງຂັ້ນເມືອງ;

4. ຄະນະໜ່ວຍປ່ອນບັດເລືອກຕັ້ງ.

ການປະກອບຄະນະກຳມະການເລືອກຕັ້ງແຕ່ລະຂັ້ນ ໃຫ້ມີຕົວແທນຈາກຄະນະພັກ, ອຳນາດການປົກຄອງ ແລະອົງການຈັດຕັ້ງມະຫາຊົນ. ສຳລັບຄະນະກຳມະການເລືອກຕັ້ງລະດັບຊາດ, ຂັ້ນແຂວງ, ກຳແພງນະຄອນ ແລະເຂດພິເສດນັ້ນ ໃຫ້ມີຕົວແທນຂອງສະພາແຫ່ງຊາດ.

ຄະນະກຳມະການເລືອກຕັ້ງຂັ້ນຕ່າງໆມີສິດສ້າງຕັ້ງກົງຈັກຊ່ວຍວຽກຂອງຕົນຕາມຄວາມເໝາະສົມ.

## ມາດຕາ 21. ການແຕ່ງຕັ້ງຄະນະກຳມະການເລືອກຕັ້ງລະດັບຊາດ

ຄະນະປະຈຳສະພາແຫ່ງຊາດ ເປັນຜູ້ຕົກລົງແຕ່ງຕັ້ງຄະນະກຳມະການເລືອກຕັ້ງ ລະດັບຊາດ ແລ້ວປະກາດອອກໂດຍລັດຖະດຳລັດຂອງປະທານປະເທດ ຢ່າງຊ້າ ຮ້ອຍຊາວວັນ ກ່ອນວັນເລືອກຕັ້ງ.

ຄະນະກຳມະການເລືອກຕັ້ງລະດັບຊາດປະກອບດ້ວຍຈຳນວນ ແຕ່ ສິບຫ້າ ຫາ ສິບເຈັດ ຄົນ, ໃນນັ້ນ ມີປະທານໜຶ່ງຄົນ, ຮອງປະທານ ສອງ ຫາ ສາມ ຄົນ ແລະກຳມະການຈຳນວນໜຶ່ງ.

ອາຍຸການຂອງຄະນະກຳມະການເລືອກຕັ້ງລະດັບຊາດຈະສິ້ນສຸດລົງ ພາຍຫລັງສຳເລັດກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດຊຸດນັ້ນ.

## ມາດຕາ 22 (ໃໝ່). ສິດ ແລະ ໜ້າທີ່ຂອງຄະນະກຳມະການເລືອກຕັ້ງລະດັບຊາດ

ຄະນະກຳມະການເລືອກຕັ້ງລະດັບຊາດມີສິດ ແລະ ໜ້າທີ່ ດັ່ງນີ້ :

1. ແນະນຳໃຫ້ແຂວງ, ກຳແພງນະຄອນ ແລະ ເຂດພິເສດ ແຕ່ງຕັ້ງຄະນະກຳມະການເລືອກຕັ້ງຂັ້ນຂອງຕົນ;

2. ຈັດຕັ້ງການສຶກສາອົບຮົມທາງດ້ານການເມືອງແນວຄິດ ເພື່ອຮັບປະກັນການຍົກລະດັບການນຳໃຊ້ສິດປະຊາທິປະໄຕຂອງປະຊາຊົນບັນດາເຜົ່າ ແລະ ຮັບປະກັນຄວາມເປັນເອກະພາບກ່ຽວກັບການຈັດຕັ້ງປະຕິບັດວຽກງານການເລືອກຕັ້ງໃນທົ່ວປະເທດໃຫ້ໄດ້ຮັບຜົນດີ;

3. ຈັດຕັ້ງປະຕິບັດວຽກງານການເລືອກຕັ້ງ, ຊຸກຍູ້ ແລະ ບຸກລະດົມຂະບວນການໃນດ້ານຕ່າງໆ, ແນະນຳໃຫ້ທຸກຄົນເຄົາລົບກົດໝາຍ ວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ;

4. ກະກຽມ ແລະ ແຈກຢາຍບັນດາເອກະສານກ່ຽວກັບການເລືອກຕັ້ງ;

5. ຄົນຄ້ວາພິຈາລະນາຄຳຮ້ອງຂໍສະໝັກຮັບເລືອກຕັ້ງເພື່ອອະນຸມັດ ແລະ ປະກາດລາຍຊື່ຜູ້ສະໝັກຮັບເລືອກຕັ້ງຢ່າງເປັນທາງການ;

6. ຄົນຄ້ວາພິຈາລະນາ ແລະ ແກ້ໄຂຄຳຮ້ອງຂໍຕໍ່ວ່າຂອງຜູ້ມີສິດເລືອກຕັ້ງ ແລະ ຂອງຜູ້ມີສິດຮັບສະໝັກຮັບເລືອກຕັ້ງກ່ຽວກັບວຽກງານຂອງຄະນະກຳມະການເລືອກຕັ້ງ;

7. ຊີ້ນຳ, ນຳພາ ແລະ ຕິດຕາມກວດກາການເຄື່ອນໄຫວວຽກງານຂອງຄະນະກຳມະການເລືອກຕັ້ງຂັ້ນຕ່າງໆ ໃນທົ່ວປະເທດ;

8. ສັງລວມ ແລະ ປະກາດຜົນຂອງການເລືອກຕັ້ງ;

9. ອອກບັດຢັ້ງຢືນຊົ່ວຄາວ ໃຫ້ຜູ້ທີ່ຖືກເລືອກຕັ້ງເປັນສະມາຊິກສະພາແຫ່ງຊາດ;

10. ສະຫລຸບຕີລາຄາ ແລະຖອດຖອນບົດຮຽນກ່ຽວກັບການເລືອກຕັ້ງ, ຍ້ອງຍໍສັນລະເສີນຕໍ່ການຈັດຕັ້ງ ແລະບຸກຄົນ ທີ່ມີຜົນງານດີເດັ່ນ;

11. ລາຍງານຜົນສໍາເລັດຂອງການເລືອກຕັ້ງ ຕໍ່ກອງປະຊຸມຄັ້ງປະຖົມມະລຶກ ຂອງສະພາແຫ່ງຊາດຊຸດໃຫມ່.

## ມາດຕາ 23. ການແຕ່ງຕັ້ງຄະນະກໍາມະການເລືອກຕັ້ງຂັ້ນທ້ອງຖິ່ນ

ເຈົ້າແຂວງ, ເຈົ້າຄອງກໍາແພງນະຄອນ, ຫົວຫນ້າເຂດພິເສດ ແລະເຈົ້າເມືອງເປັນຜູ້ແຕ່ງຕັ້ງຄະນະກໍາມະການເລືອກຕັ້ງຂັ້ນຂອງຕົນ ແລ້ວປະກາດເປັນທາງການ ຢ່າງຊ້າ ເກົ້າສິບວັນ ກ່ອນວັນເລືອກຕັ້ງ.

ຄະນະກໍາມະການເລືອກຕັ້ງຂັ້ນແຂວງ, ກໍາແພງນະຄອນ ແລະເຂດພິເສດປະກອບດ້ວຍຈໍານວນແຕ່ ສິບເອັດ ຫາ ສິບສາມ ຄົນ, ໃນນັ້ນ ມີປະທານ ໜຶ່ງຄົນ, ຮອງປະທານ ໜຶ່ງ ຫາ ສອງ ຄົນ ແລະກໍາມະການຈໍານວນໜຶ່ງ. ຄະນະກໍາມະການເລືອກຕັ້ງຂັ້ນເມືອງປະກອບດ້ວຍຈໍານວນ ແຕ່ ເຈັດ ຫາ ເກົ້າ ຄົນ, ໃນນັ້ນ ມີປະທານໜຶ່ງຄົນ,ຮອງປະທານ ໜຶ່ງ ຫາ ສອງ ຄົນ ແລະກໍາມະການຈໍານວນໜຶ່ງ.

ອາຍຸການຂອງຄະນະກໍາມະການເລືອກຕັ້ງຂັ້ນທ້ອງຖິ່ນຈະສິ້ນສຸດລົງ ພາຍຫລັງສໍາເລັດກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດຊຸດນັ້ນ.

## ມາດຕາ 24. ສິດ ແລະຫນ້າທີ່ຂອງຄະນະກໍາມະການເລືອກຕັ້ງຂັ້ນທ້ອງຖິ່ນ

ຄະນະກໍາມະການເລືອກຕັ້ງຂັ້ນແຂວງ, ກໍາແພງນະຄອນ, ເຂດພິເສດ ແລະຂັ້ນເມືອງມີສິດ ແລະຫນ້າທີ່ ດັ່ງນີ້ :

1. ຈັດຕັ້ງການສຶກສາອົບຮົມທາງດ້ານການເມືອງ, ແນວຄິດຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ເພື່ອຮັບປະກັນການຍົກລະດັບການນໍາໃຊ້ສິດປະຊາທິປະໄຕຂອງປະຊາຊົນບັນດາເຜົ່າ ແລະຮັບປະກັນຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດວຽກງານການເລືອກຕັ້ງໃນຂັ້ນຂອງຕົນເປັນຢ່າງດີ;

2. ຈັດຕັ້ງປະຕິບັດວຽກງານການເລືອກຕັ້ງ, ຊຸກຍູ້ ແລະປຸກລະດົມຂະບວນການໃນດ້ານຕ່າງໆ, ແນະນໍາໃຫ້ທຸກຄົນເຄົາລົບ ແລະປະຕິບັດກົດຫມາຍ ວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

3. ແຈກຢາຍບັນດາເອກະສານ ກ່ຽວກັບການເລືອກຕັ້ງໃຫ້ຄະນະກໍາມະການເລືອກຕັ້ງຂັ້ນລຸ່ມ;

4. ຊີ້ນໍາ, ນໍາພາ ແລະຕິດຕາມກວດກາການເຄື່ອນໄຫວວຽກງານຂອງຄະນະກໍາມະການເລືອກຕັ້ງຂັ້ນລຸ່ມ;

5. ຊີ້ນໍາ, ນໍາພາວຽກງານປ້ອງກັນຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍໃນການເລືອກຕັ້ງສະມາຊິກສະພາແຫ່ງຊາດໃນຂັ້ນຂອງຕົນ;

6. ນຳພາການຈັດຕັ້ງໂຄສະນາຫາສຽງ ແລະແນະນຳຊີວະປະຫວັດຂອງຜູ້ສະໝັກຮັບເລືອກຕັ້ງໃຫ້ປະຊາຊົນຊາບ;

7. ພິຈາລະນາແກ້ໄຂຄຳຮ້ອງຂໍຕໍ່ວ່າຂອງຜູ້ມີສິດເລືອກຕັ້ງ ແລະຜູ້ມີສິດສະໝັກຮັບເລືອກຕັ້ງກ່ຽວກັບວຽກງານຂອງຄະນະກຳມະການເລືອກຕັ້ງຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

8. ສັງລວມຜົນຂອງການເລືອກຕັ້ງ ແລ້ວສົ່ງໃຫ້ຄະນະກຳມະການເລືອກຕັ້ງຂັ້ນເທິງຂອງຕົນ ໃຫ້ທັນຕາມກຳນົດເວລາ;

9. ສະຫລຸບຕີລາຄາ ແລະຖອດຖອນບົດຮຽນກ່ຽວກັບການເລືອກຕັ້ງ, ຈັດຕັ້ງການຍ້ອງຍໍສັນລະເສີນຕໍ່ການຈັດຕັ້ງ ແລະບຸກຄົນ ທີ່ມີຜົນງານດີເດັ່ນຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ.

## ມາດຕາ 25 (ໃໝ່). ການແຕ່ງຕັ້ງຄະນະໜ່ວຍປ່ອນບັດເລືອກຕັ້ງ

ເຈົ້າເມືອງເປັນຜູ້ແຕ່ງຕັ້ງຄະນະໜ່ວຍປ່ອນບັດເລືອກຕັ້ງໃນຂອບເຂດເມືອງຂອງຕົນ.

ຄະນະກອງບັນຊາການກອງພົນ ຫລື ກອງພັນໃຫຍ່, ກອງພັນ ແລະຄະນະກອງບັນຊາການແຂວງ, ກຳແພງນະຄອນ, ເຂດພິເສດ, ຫົວໜ້າຫ້ອງການກະຊວງປ້ອງກັນປະເທດ ແລະ ຫົວໜ້າຫ້ອງການກະຊວງພາຍໃນ ເປັນຜູ້ແຕ່ງຕັ້ງຄະນະໜ່ວຍປ່ອນບັດເລືອກຕັ້ງຢູ່ໃນກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລ້ວແຈ້ງໃຫ້ຄະນະກຳມະການເລືອກຕັ້ງຂັ້ນເມືອງ ບ່ອນທີ່ ກົມກອງນັ້ນຕັ້ງຢູ່ຊາບ.

ຄະນະໜ່ວຍປ່ອນບັດເລືອກຕັ້ງປະກອບດ້ວຍແຕ່ ຫ້າ ຫາ ເຈັດ ຄົນ, ໃນນັ້ນ ມີຫົວໜ້າໜຶ່ງຄົນ, ຮອງຫົວໜ້າໜຶ່ງຄົນ, ເລຂານຸການໜຶ່ງ ຫລື ສອງຄົນ ແລະກຳມະການຈຳນວນໜຶ່ງ.

ອາຍຸການຂອງຄະນະໜ່ວຍປ່ອນບັດເລືອກຕັ້ງຈະສິ້ນສຸດລົງພາຍຫລັງສຳເລັດກອງປະຊຸມຄັ້ງປະຖົມມະລຶກຂອງສະພາຊຸດນັ້ນ.

## ມາດຕາ 26. ສິດແລະໜ້າທີ່ຂອງຄະນະໜ່ວຍປ່ອນບັດເລືອກຕັ້ງ

ຄະນະໜ່ວຍປ່ອນບັດເລືອກຕັ້ງມີສິດ ແລະໜ້າທີ່ ດັ່ງນີ້ :

1. ສຶກສາອົບຮົມ ແລະຈັດຕັ້ງນຳພາ ຜູ້ມີສິດເລືອກຕັ້ງໃນຂອບເຂດຄວາມຮັບຜິດຊອບ ຂອງຕົນໃຫ້ໄປໃຊ້ສິດປ່ອນບັດເລືອກຕັ້ງຢ່າງຄົບຖ້ວນ;

2. ຈັດຕັ້ງປະຕິບັດວຽກງານກ່ຽວກັບການເລືອກຕັ້ງ, ຊຸກຍູ້, ແນະນຳໃຊ້ທຸກຄົນເຄົາລົບລະບຽບແລະກົດໝາຍວ່າດ້ວຍການເລືອກຕັ້ງ;

3. ກະກຽມສະຖານທີ່ ແລະອຸປະກອນຮັບໃຊ້ການປ່ອນບັດເລືອກຕັ້ງ;

4. ແຈກຢາຍບັດລົງຄະແນນສຽງໃຫ້ແກ່ຜູ້ມີສິດເລືອກຕັ້ງ;

5. ຮັບຜິດຊອບວຽກງານປ່ອນບັດເລືອກຕັ້ງ, ຮັບປະກັນຄວາມສະຫງົບ ແລະຄວາມເປັນລະບຽບຮຽບຮ້ອຍຢູ່ໜ່ວຍປ່ອນບັດເລືອກຕັ້ງຂອງຕົນ;

6. ແກ້ໄຂຄຳສະເໜີ ຫລື ຄຳຮ້ອງຂໍຕໍ່ວ່າຂອງຜູ້ມີສິດເລືອກຕັ້ງຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

7. ນັບ, ກວດກາບັດ ແລະເຮັດບົດບັນທຶກຜົນຂອງການປ່ອນບັດເລືອກຕັ້ງຢູ່ໜ່ວຍຂອງຕົນ ແລ້ວມອບບົດບັນທຶກ ແລະເອກະສານຕ່າງໆໃຫ້ຄະນະກຳມະການເລືອກຕັ້ງຂັ້ນເມືອງ;

8. ເກັບມ້ຽນບັດລົງຄະແນນສຽງ ທີ່ໄດ້ປ່ອນບັດແລ້ວນັ້ນ ໄວ້ຈົນກວ່າໄດ້ປະກາດລາຍຊື່ ຜູ້ທີ່ໄດ້ຮັບການເລືອກຕັ້ງ ເປັນສະມາຊິກສະພາແຫ່ງຊາດຢ່າງເປັນທາງການ ແລ້ວຈຶ່ງທຳລາຍ;

9. ສະຫລຸບຕີລາຄາ ແລະຖອດຖອນບົດຮຽນກ່ຽວກັບການເລືອກຕັ້ງ, ຄັດເລືອກຕົວເດັ່ນ ແລ້ວສະເໜີໃຫ້ຄະນະກຳມະການເລືອກຕັ້ງຂັ້ນເມືອງ ພິຈາລະນາ ເພື່ອຍ້ອງຍໍສັນລະເສີນ.

## ໝວດທີ VI
## ການກຳນົດວັນເວລາ ແລະລະບຽບການປ່ອນບັດເລືອກຕັ້ງ

### ມາດຕາ 27. ການກຳນົດວັນເລືອກຕັ້ງ

ຄະນະປະຈຳສະພາແຫ່ງຊາດເປັນຜູ້ກຳນົດວັນເລືອກຕັ້ງ ແລ້ວປະກາດຢ່າງເປັນທາງການໂດຍລັດຖະດຳລັດຂອງປະທານປະເທດ ກ່ອນວັນເລືອກຕັ້ງ ໜຶ່ງຮ້ອຍສາມສິບ ວັນ.

ການເລືອກຕັ້ງແມ່ນດຳເນີນຢ່າງເປັນເອກະພາບໃນວັນດຽວກັນທົ່ວປະເທດ ໂດຍຖືເອົາວັນອາທິດເປັນວັນເລືອກຕັ້ງ.

### ມາດຕາ 28. ການກຳນົດເວລາປ່ອນບັດເລືອກຕັ້ງ

ເວລາດຳເນີນການປ່ອນບັດເລືອກຕັ້ງແມ່ນເລີ່ມ ແຕ່ ເຈັດໂມງເຊົ້າ ຫາ ຫ້າໂມງແລງ. ຄະນະໜ່ວຍປ່ອນບັດເລືອກຕັ້ງອາດຈະຕົກລົງໄຂພິທີ ຫລື ອັດພິທີໄວ ຫລື ຊ້າກວ່າເວລາ ທີ່ໄດ້ກຳນົດໄວ້ນັ້ນກໍໄດ້ ໂດຍອີງໃສ່ສະພາບການຕົວຈິງຂອງແຕ່ລະບ່ອນ, ແຕ່ບໍ່ໃຫ້ໄຂພິທີກ່ອນ ຫ້າໂມງເຊົ້າ ແລະອັດພິທີຊ້າກວ່າ ເຈັດໂມງແລງ.

### ມາດຕາ 29. ລະບຽບການປ່ອນບັດເລືອກຕັ້ງ

ລະບຽບການປ່ອນບັດເລືອກຕັ້ງມີ ດັ່ງນີ້ :

1. ສະຖານທີ່ປ່ອນບັດເລືອກຕັ້ງໃຫ້ຈັດໃສ່ບ່ອນ ທີ່ເຫັນວ່າເໝາະສົມ ເຊັ່ນ : ໂຮງຮຽນ, ສະໂມສອນ ຫລື ສະຖານທີ່ອື່ນໆ;

2. ຄະນະໜ່ວຍປ່ອນບັດເລືອກຕັ້ງຕ້ອງແນະນຳ, ເຜີຍແຜ່ລະບຽບການຕ່າງໆ ແລະວິທີລົງຄະແນນສຽງ ໃຫ້ຜູ້ມີສິດເລືອກຕັ້ງທຸກຄົນເຂົ້າໃຈ;

3. ກ່ອນການປ່ອນບັດ, ຄະນະໜ່ວຍປ່ອນບັດເລືອກຕັ້ງຕ້ອງໄຂຫີບບັດຊ່ອງໜ້າປະຊາຊົນ;

4. ຜູ້ມີສິດເລືອກຕັ້ງຕ້ອງສະເໜີຕົວ ແລະແຈ້ງບັດຢັ້ງຢືນຕໍ່ຄະນະໜ່ວຍປ່ອນບັດເລືອກຕັ້ງ ເພື່ອຮັບເອົາບັດລົງຄະແນນສຽງ;

5. ໃນເວລາຜູ້ມີສິດເລືອກຕັ້ງຂີດບັດນັ້ນ ຫ້າມຜູ້ອື່ນເຂົ້າໄປຫຍຸ້ງກ່ຽວຢ່າງເດັດຂາດ;

6. ສຳລັບຜູ້ມີສິດເລືອກຕັ້ງ ທີ່ບໍ່ຮູ້ໜັງສື ເຊິ່ງບໍ່ສາມາດຂີດບັດດ້ວຍຕົນເອງໄດ້ນັ້ນ ຄະນະໜ່ວຍເລືອກຕັ້ງມີສິດແຕ່ງຕັ້ງຜູ້ຮັບຜິດຊອບຊ່ວຍຂີດບັດ, ແຕ່ຕ້ອງປະຕິບັດຕາມຄວາມມັກຂອງຜູ້ນັ້ນ ແລະໃຫ້ຜູ້ກ່ຽວນຳເອົາບັດລົງຄະແນນສຽງໄປປ່ອນເອງ. ໃນກໍລະນີທີ່ປ່ອນບັດເອງບໍ່ໄດ້ ແມ່ນມອບໃຫ້ຄະນະໜ່ວຍປ່ອນບັດເລືອກຕັ້ງຜູ້ໃດຜູ້ໜຶ່ງ ຊ່ວຍປ່ອນໃຫ້ ໂດຍຊ່ອງໜ້າຜູ້ກ່ຽວ;

7. ໃນກໍລະນີຜູ້ມີສິດເລືອກຕັ້ງເຈັບປ່ວຍ, ເສຍອົງຄະ, ເຖົ້າແກ່ໄປປ່ອນບັດບໍ່ໄດ້ນັ້ນ ຄະນະໜ່ວຍປ່ອນບັດເລືອກຕັ້ງຕ້ອງຈັດຕັ້ງໜ່ວຍຮັບຜິດຊອບຫີບບັດເຄື່ອນທີ່ ໄປຮັບເອົາບັດລົງຄະແນນສຽງກັບທີ່;

8. ຖ້າຜູ້ມີສິດເລືອກຕັ້ງຫາກຂີດບັດຜິດ ຕ້ອງສົ່ງບັດທີ່ຂີດຜິດນັ້ນຄືນ ແລ້ວຂໍເອົາບັດໃໝ່ນຳຄະນະໜ່ວຍປ່ອນບັດເລືອກຕັ້ງ;

9. ຜູ້ມີສິດເລືອກຕັ້ງຕ້ອງປ່ອນບັດລົງຄະແນນສຽງໃສ່ຫີບບັດເທື່ອລະຄົນ;

10.ໃນເວລາດຳເນີນການປ່ອນບັດຢູ່ນັ້ນ ຫ້າມບຸກຄົນ ຫລື ກຸ່ມຄົນໃດໜຶ່ງໂຄສະນາຫາສຽງ ໃຫ້ຜູ້ສະໝັກຮັບເລືອກຕັ້ງຜູ້ໃດຜູ້ໜຶ່ງ ຫລື ກໍ່ຄວາມວຸ້ນວາຍ ອັນຈະເປັນການລະເມີດລະບຽບຫລັກການກ່ຽວກັບການເລືອກຕັ້ງ.

**ມາດຕາ 30. ມາດຕະການແກ້ໄຂເຫດການສຸກເສີນຢູ່ບ່ອນປ່ອນບັດເລືອກຕັ້ງ**

ໃນເວລາດຳເນີນການປ່ອນບັດນັ້ນ ຖ້າຫາກມີເຫດການສຸກເສີນຮ້າຍແຮງເກີດຂຶ້ນ ຄະນະໜ່ວຍປ່ອນບັດເລືອກຕັ້ງຕ້ອງປະກາດໂຈະການປ່ອນບັດໃນທັນທີ, ແຕ່ຕ້ອງພິຈາລະນາແກ້ໄຂ ເພື່ອເຮັດໃຫ້ການປ່ອນບັດໄດ້ສືບຕໍ່. ຖ້າຫາກບໍ່ສາມາດແກ້ໄຂໄດ້ນັ້ນ ກໍໃຫ້ປະກາດງົດ ການປ່ອນບັດເລືອກຕັ້ງ ແລ້ວລາຍງານໃຫ້ຄະນະກຳມະການເລືອກຕັ້ງຂັ້ນເມືອງຊາບທັນທີ ເພື່ອກຳນົດວັນເລືອກຕັ້ງໃໝ່.

## ໝວດທີ VII
## ການນັບຄະແນນສຽງ ແລະປະກາດຜົນຂອງການເລືອກຕັ້ງ

**ມາດຕາ 31. ການນັບຄະແນນສຽງ**

ການນັບຄະແນນສຽງຕ້ອງດຳເນີນໄປຢ່າງເປີດເຜີຍ ໂດຍຊ່ອງໜ້າພະຍານ ຢ່າງໜ້ອຍສາມຄົນ ທີ່ມາຈາກຜູ້ມີສິດເລືອກຕັ້ງຂອງໜ່ວຍປ່ອນບັດເລືອກຕັ້ງນັ້ນ, ແຕ່ຫາກບໍ່ແມ່ນຜູ້ສະໝັກຮັບເລືອກຕັ້ງ.

ນັກຂ່າວ ແລະຜູ້ຕາງໜ້າຂອງຜູ້ສະໝັກຮັບເລືອກຕັ້ງ ຈະເຂົ້າຮ່ວມສັງເກດການ ແລະ ຕິດຕາມການນັບຄະແນນສຽງກໍໄດ້.

ຄະນະໜ່ວຍປ່ອນບັດເລືອກຕັ້ງຕ້ອງແບ່ງໜ້າທີ່ຮັບຜິດຊອບໃນການນັບຄະແນນສຽງ ດັ່ງນີ້ : ຜູ້ໜຶ່ງອ່ານ, ຜູ້ໜຶ່ງກວດກາຄືນ, ເຫລືອນັ້ນ ເປັນຜູ້ຕິດຕາມ ແລະບັນທຶກ.

**ມາດຕາ 32. ບັດລົງຄະແນນສຽງທີ່ບໍ່ຖືກຕ້ອງ**

ບັດລົງຄະແນນສຽງ ທີ່ບໍ່ຖືກຕ້ອງ ມີດັ່ງນີ້ :

1. ບັດລົງຄະແນນສຽງ ທີ່ບໍ່ມີຕາປະທັບຂອງຫນ່ວຍປ່ອນບັດເລືອກຕັ້ງນັ້ນ;

2. ບັດລົງຄະແນນສຽງ ທີ່ຂີດຊື່ຜູ້ສະຫມັກຮັບເລືອກຕັ້ງເກີນ ຫລື ຫລຸດຈຳນວນ ທີ່ໄດ້ກຳນົດໄວ້;

3. ບັດລົງຄະແນນສຽງ ທີ່ບໍ່ຂີດຊື່ຜູ້ສະຫມັກຮັບເລືອກຕັ້ງ.

**ມາດຕາ 33. ບົດບັນທຶກຜົນການປ່ອນບັດເລືອກຕັ້ງ**

ບົດບັນທຶກຜົນການປ່ອນບັດເລືອກຕັ້ງມີເນື້ອໃນ ດັ່ງນີ້ :

1. ເວລາໄຂ ແລະອັດພິທີປ່ອນບັດເລືອກຕັ້ງ;

2. ລາຍຊື່ຜູ້ສະຫມັກຮັບເລືອກຕັ້ງ;

3. ຈຳນວນຜູ້ມີສິດເລືອກຕັ້ງທັງຫມົດ;

4. ຈຳນວນຜູ້ ທີ່ມາປ່ອນບັດເລືອກຕັ້ງຕົວຈິງ;

5. ຈຳນວນບັດລົງຄະແນນສຽງ ທີ່ໄດ້ຮັບຕົວຈິງ;

6. ຈຳນວນບັດລົງຄະແນນສຽງ ທີ່ຂີດຜິດ ຊຶ່ງໄດ້ນຳມາປ່ຽນເອົາບັດໃຫມ່;

7. ຈຳນວນບັດລົງຄະແນນສຽງທີ່ຖືກຕ້ອງ;

8. ຈຳນວນບັດລົງຄະແນນສຽງທີ່ບໍ່ຖືກຕ້ອງ;

9. ຈຳນວນຄະແນນສຽງຂອງຜູ້ສະຫມັກຮັບເລືອກຕັ້ງແຕ່ລະຄົນ;

10. ຄຳຮ້ອງຂໍຕໍ່ວ່າ ທີ່ຄະນະຫນ່ວຍປ່ອນບັດເລືອກຕັ້ງໄດ້ແກ້ໄຂແລ້ວ ແລະຄຳຮ້ອງຂໍຕໍ່ວ່າ ທີ່ແກ້ໄຂບໍ່ທັນໄດ້ (ຖ້າຫາກມີ).

ບົດບັນທຶກດັ່ງກ່າວຕ້ອງມີລາຍເຊັນຂອງຫົວຫນ້າຄະນະຫນ່ວຍປ່ອນບັດເລືອກຕັ້ງ, ເລຂານຸການ ແລະ ພະຍານສາມຄົນ ທີ່ເຂົ້າຮ່ວມໃນການກວດກາບັດ. ບົດບັນທຶກນັ້ນສະບັບຫນຶ່ງສົ່ງໃຫ້ຄະນະກຳມະການເລືອກຕັ້ງຂັ້ນເມືອງ ແລະສະບັບຫນຶ່ງ ມອບໃຫ້ນາຍບ້ານເກັບຮັກສາໄວ້.

**ມາດຕາ 34. ຜູ້ທີ່ຖືກເລືອກຕັ້ງເປັນສະມາຊິກສະພາແຫ່ງຊາດ**

ຜູ້ທີ່ຖືກເລືອກຕັ້ງ ເປັນສະມາຊິກສະພາແຫ່ງຊາດ ແມ່ນຜູ້ທີ່ໄດ້ຮັບຄະແນນສຽງຫລາຍກ່ວາຕາມລຳດັບ ຈົນຄົບຕາມຈຳນວນທີ່ຕ້ອງການ ຊຶ່ງໄດ້ກຳນົດໄວ້ສຳລັບເຂດເລືອກຕັ້ງນັ້ນ.

ໃນກໍລະນີຄະແນນສຽງຂອງຜູ້ຢູ່ໃນອັນດັບສຸດທ້າຍຂອງຈຳນວນທີ່ຕ້ອງການໃນເຂດເລືອກຕັ້ງໃດຫນຶ່ງຫາກເທົ່າກັນນັ້ນ ໃຫ້ຕັດສິນເອົາຜູ້ທີ່ມີອາຍຸການຫລາຍກວ່າ, ແຕ່ໃນກໍລະນີ ທີ່ອາຍຸການຫາກເທົ່າກັນ ແມ່ນໃຫ້ເອົາຜູ້ທີ່ມີອາຍຸກະສຽນສູງກວ່າ ເປັນສະມາຊິກສະພາແຫ່ງຊາດ.

## ຫມວດທີ VIII
## ການເລືອກຕັ້ງສະມາຊິກສະພາແຫ່ງຊາດແທນ

**ມາດຕາ 35 (ໃໝ່). ການເລືອກຕັ້ງແທນ**

ການເລືອກຕັ້ງສະມາຊິກສະພາແຫ່ງຊາດແທນນັ້ນຈະໄດ້ຈັດຂຶ້ນ ໃນເມື່ອສະມາຊິກສະພາແຫ່ງຊາດຜູ້ໃດຜູ້ໜຶ່ງໃນເຂດເລືອກຕັ້ງໃດໜຶ່ງ ຫາກວ່າງລົງ.

ການເລືອກຕັ້ງດັ່ງກ່າວຈະດຳເນີນໄດ້ ກໍຕໍ່ເມື່ອຫາກມີການຕົກລົງດ້ວຍສຽງສ່ວນຫລາຍຂອງສະມາຊິກສະພາແຫ່ງຊາດ ທັງໝົດທີ່ເຂົ້າຮ່ວມກອງປະຊຸມຕາມການສະເໜີ ຂອງຄະນະປະຈຳສະພາແຫ່ງຊາດ.

**ມາດຕາ 36. ການຈັດຕັ້ງການເລືອກຕັ້ງແທນ**

ຄະນະປະຈຳສະພາແຫ່ງຊາດເປັນຜູ້ຕົກລົງແຕ່ງຕັ້ງຄະນະກຳມະການເລືອກຕັ້ງ ແລະກຳນົດວັນເລືອກຕັ້ງແທນ.

ການດຳເນີນການເລືອກຕັ້ງແທນນັ້ນ ໃຫ້ປະຕິບັດຕາມກົດໝາຍ ວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດສະບັບນີ້.

## ໝວດທີ IX
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະມາດຕະການ ຕໍ່ຜູ້ທີ່ລະເມີດກົດໝາຍເລືອກຕັ້ງ

**ມາດຕາ 37. ນະໂຍບາຍຕໍ່ຜູ້ມີຜົນງານ**

ການຈັດຕັ້ງ ແລະບຸກຄົນໃດ ທີ່ມີຜົນງານດີເດັ່ນໃນການປະຕິບັດກົດໝາຍເລືອກຕັ້ງສະມາຊິກສະພາແຫ່ງຊາດ ຈະໄດ້ຮັບການຍ້ອງຍໍສັນລະເສີນຢ່າງເໝາະສົມ ຕາມນະໂຍບາຍຂອງພັກ ແລະລັດ.

**ມາດຕາ 38. ມາດຕະການຕໍ່ຜູ້ລະເມີດ**

ການຈັດຕັ້ງ ຫລື ບຸກຄົນໃດ ທີ່ລະເມີດລະບຽບກົດໝາຍ ວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຈະຖືກດຳເນີນມາດຕະການ ດັ່ງນີ້ :

1. ສຶກສາອົບຮົມໃນກໍລະນີສະຖານເບົາ;
2. ດຳເນີນຄະດີຕາມກົດໝາຍ ໃນກໍລະນີສະຖານໜັກ.

## ໝວດທີ X
## ບົດບັນຍັດສຸດທ້າຍ

**ມາດຕາ 39. ການຈັດຕັ້ງປະຕິບັດ**

ຄະນະປະຈຳສະພາແຫ່ງຊາດແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ອອກຄຳແນະນຳຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 40. ຜົນສັກສິດ**

ກົດໝາຍ ວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ສະບັບນີ້ ປ່ຽນແທນກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ສະບັບເລກທີ 02/ສປສ, ລົງວັນທີ 14 ສິງຫາ 1991.

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ມື້ປະທານປະເທດ ແຫ່ງສາທາລະນະລັດປະຊາທິປະໄຕປະຊາຊົນລາວ ອອກລັດຖະດຳລັດ ປະກາດໃຊ້ເປັນຕົນໄປ.

ວຽງຈັນ, ວັນທີ 12 ເມສາ 1997
ປະທານສະພາແຫ່ງຊາດ
ສະໝານ ວິຍະເກດ